


# ການສຶກສາຄ່າປີ້ໂດຍສານ ແລະ ການວິເຄາະຄວາມເທົ່າທຽມທີ່ວລະບົບ RTD

RTD ແມ່ນຜູ້ໃຫ້ບໍລິການຂົນສົ່ງໂດຍສານສາທາລະນະ ສໍາລັບເຂດຕົວເມືອງເດັນເວີ. ເພື່ອເປັນການຕອບກັບຕໍ່ຄໍາຕິຊົມຈາກລູກຄ້າທີ່ວ່າ ຄ່າປີ້ໂດຍສານແພງ ແລະ ສັບສົນ, RTD ໄດ້ເລີ່ມເຮັດການສຶກສາຄ່າປີ້ໂດຍສານ ແລະ ການວິເຄາະຄວາມເທົ່າທຽມທີ່ວລະບົບ ເພື່ອເຮັດໃຫ້ປີ້ ມີ**ຄວາມເທົ່າທຽມ**, **ຈັບຈອງໄດ້** ແລະ **ຮຽບງ່າຍ**. ກະລຸນາກວດເບິ່ງການປ່ຽນແປງຕໍ່ປີ້ໂດຍສານທີ່ RTD ໄດ້ນໍາສະເໜີໃຫ້ມີ!

## ການສະເໜີໃນການສຶກສາຄ່າປີ້ໂດຍສານ

### ໂຄງສ້າງໃໝ່ຂອງປີ້ໂດຍສານທີ່ຄົບຖ້ວນ

ໂຄງສ້າງໃໝ່ຂອງປີ້ໂດຍສານທີ່ຄົບຖ້ວນທີ່ໄດ້ສະເໜີ**ຈະຫຼຸດຄ່າປີ້ໂດຍສານສໍາລັບລູກຄ້າທັງໝົດ** ແລະ **ລົບລ້າງຄ່າປີ້ໂດຍສານປະຈໍາເຂດ**.

| | ຄ່າປີ້ໂດຍສານທີ່ຄົບຖ້ວນໃນປະຈຸບັນ | | | ຄ່າປີ້ໂດຍສານທີ່ຄົບຖ້ວນທີ່ແນະນໍາ | |
|---|---|---|---|---|---|
| | ທ້ອງຖິ່ນ | ປະຈໍາເຂດ | ສະໜາມບິນ | ມາດຕະຖານ (ທ້ອງຖິ່ນ/ປະຈໍາເຂດ) | ສະໜາມບິນ (SkyRide/A Line) |
| 3-ຊົ່ວໂມງ | $3.00 | $5.25 | $10.50 | $2.75 | $10 |
| ລາຍວັນ | $6.00 | $10.50 | | $5.50 | |
| ລາຍເດືອນ | $114 | $200 | | $88 | |

- ຄ່າການເດີນທາງໄປຫາ ແລະ ຈາກສະໜາມບິນສາກົນເດັນເວີ (Denver International Airport) (ດ້ວຍ A Line ຫຼື SkyRide) ແມ່ນ $10
- ຖ້ຽວເດີນທາງອື່ນໆໃນເຂດບໍລິການຂອງ RTD ແມ່ນມີຄ່າປີ້ທີ່ $2.75 ສໍາລັບປີ້ 3-ຊົ່ວໂມງ ຫຼື $5.50 ສໍາລັບປີ້ລາຍວັນ
- ລູກຄ້າທີ່ຖືປີ້ລາຍເດືອນສາມາດເດີນທາງໄປໄດ້ທຸກບ່ອນ, ລວມທັງການໄປ ແລະ ມາຈາກສະໜາມບິນໃນລາຄາທີ່ $88

### ໂຄງສ້າງໃໝ່ສໍາລັບປີ້ໂດຍສານທີ່ມີສ່ວນຫຼຸດ

RTD ມີປີ້ໂດຍສານທີ່ມີສ່ວນຫຼຸດສໍາລັບຜູ້ໃຫຍ່ທີ່ມີອາຍຸ 65 ປີຂຶ້ນໄປ, ບຸກຄົນທີ່ມີຄວາມພິການ, ຜູ້ຮັບ Medicare ແລະ ບຸກຄົນທີ່ມີລາຍໄດ້ຕໍ່າ ("LiVE"). ໂຄງສ້າງປີ້ໂດຍສານທີ່ມີສ່ວນຫຼຸດທີ່ແນະນໍາ**ຈະຫຼຸດຄ່າປີ້ໂດຍສານໃຫ້ແກ່ລູກຄ້າ ແລະ ລວມຄ່າປີ້ໂດຍສານທັງໝົດ ເພື່ອວ່າຜູ້ໃຫຍ່ທຸກຄົນທີ່ນໍາໃຊ້ປີ້ໂດຍສານທີ່ມີສ່ວນຫຼຸດຈະຈ່າຍຄ່າປີ້ໃນລາຄາດຽວກັນສໍາລັບທຸກຖ້ຽວການເດີນທາງ**.

| | ຄ່າປີ້ໂດຍສານທີ່ມີສ່ວນຫຼຸດໃນປະຈຸບັນ *ຄ່າປີ້ໂດຍສານສໍາລັບຜູ້ທີ່ມີອາຍຸ 65+, ມີຄວາມພິການ, ຜູ້ຮັບ Medicare / ຄ່າປີ້ໂດຍສານ LiVE* | | | ຄ່າປີ້ໂດຍສານທີ່ມີສ່ວນຫຼຸດທີ່ແນະນໍາ |
|---|---|---|---|---|
| | ທ້ອງຖິ່ນ | ປະຈໍາເຂດ | ສະໜາມບິນ | ທ້ອງຖິ່ນ, ປະຈໍາເຂດ ແລະ ສະໜາມບິນ |
| 3-ຊົ່ວໂມງ | $1.50 / $1.80 | $2.60 / $3.15 | $10.50 / $6.30 | $1.35 |
| ລາຍມື້ | $3.00 / $3.60 | $5.25 / $6.30 | | $2.70 |
| ລາຍເດືອນ | $57 / $68.40 | $99 / $119.70 | | $27 |



- ຜູ້ໃຫຍ່ທີ່ນຳໃຊ້ປີ້ທີ່ມີສ່ວນຫຼຸດແມ່ນສາມາດເດີນທາງໄປ *ທຸກປາຍທາງ* ລວມທັງສະໜາມບິນ ໃນລາຄາປີ້ໂດຍສານທີ່ມີສ່ວນຫຼຸດ
  - ປີ້ 3-ຊົ່ວໂມງຈະມີລາຄາທີ່ $1.35 ແລະ ປີ້ລາຍວັນຈະມີລາຄາທີ່ $2.70 (ຫຼຸດ 50% ຈາກຄ່າປີ້ໂດຍສານເຕັມ)
  - ປີ້ລາຍເດືອນຈະມີລາຄາທີ່ $27 (ສ່ວນຫຼຸດ 70% ຈາກຄ່າປີ້ໂດຍສານເຕັມ)

## ການຂະຫຍາຍ ໂຄງການສ່ວນຫຼຸດທີ່ອີງໃສ່ລາຍໄດ້ LiVE

ລູກຄ້າທີ່ມີລາຍໄດ້ຕ່ຳໃນຈຳນວນຫຼາຍຂຶ້ນຈະມີສິດຮັບສ່ວນຫຼຸດທີ່ອີງໃສ່ລາຍໄດ້ LiVE ພາຍໃຕ້ການສະເໜີ. ໂດຍສະເພາະແລ້ວ RTD ແມ່ນສະເໜີ:

- ໃຫ້ຖອດຖອນເງື່ອນໄຂໃນປະຈຸບັນທີ່ກຳນົດໃຫ້ມີທີ່ຢູ່ພາຍໃນຂອບເຂດຂອງ RTD
- ໃຫ້ເພີ່ມເກນເພດານລາຍໄດ້ຂອງຄົວເຮືອນສຳລັບການມີສິດຮັບສ່ວນຫຼຸດ LiVE ພາຍໃຕ້ການສະເໜີໃໝ່ນີ້, ຄອບຄົວທີ່ມີສະມາຊິກສີ່ຄົນທີ່ສາມາດສ້າງລາຍໄດ້ຄົວເຮືອນທີ່ $75,000 ຫຼື ໜ້ອຍກວ່ານີ້ ແລະ ມີຄຸນສົມບັດຮັບສ່ວນຫຼຸດ LiVE

ລູກຄ້າ Access-a-Ride ຍັງຈະມີສິດຮັບສ່ວນຫຼຸດ LiVE ສຳລັບຄ່າປີ້ໂດຍສານ Access-a-Ride fares.

## ໂຄງການເຍົາວະຊົນ ແລະ ນັກຮຽນ-ນັກສຶກສາ

ການສະເໜີເຮັດໃຫ້ເຍົາວະຊົນ ແລະ ນັກຮຽນ-ນັກສຶກສາສາມາດຊື້ປີ້ໂດຍສານໃນລາຄາທີ່ສາມາດຊື້ໄດ້ເຊັ່ນກັນ.

- ເດັກນ້ອຍທຸກຄົນທີ່ມີອາຍຸ 5 ປີລົງໄປແມ່ນໂດຍສານຟຣີ ໂດຍທີ່ຕ້ອງມີຜູ້ໃຫຍ່ທີ່ຈ່າຍຄ່າປີ້ໄປນຳ (ຈຳກັດເດັກນ້ອຍ 3 ຄົນຕໍ່ຜູ້ໃຫຍ່ໜຶ່ງຄົນ)
- ເຍົາວະຊົນອາຍຸ 19 ປີລົງໄປຈະໂດຍສານຟຣີພາຍໃຕ້ໂຄງການນຳຮ່ອງ Zero Fares for Youth ໄລຍະເວລາໜຶ່ງປີ
- ນັກຮຽນ-ນັກສຶກສາຈາກວິທະຍາໄລຊຸມຊົນ, ໂຮງຮຽນເຕັກນິກ ຫຼື ວິທະຍາໄລ ແລະ ມະຫາວິທະຍາໄລອື່ນໆ ທີ່ເຂົ້າຮ່ວມໃນໂຄງການ ທີ່ບໍ່ໄດ້ລົງທະບຽນໃນ CollegePass ຈະມີເງື່ອນໄຂຮັບ SemesterPass ໃນລາຄາ $70 ຕໍ່ເດືອນ



## ທ່ານຕ້ອງການໃຫ້ RTD ເຮັດການສະເໜີນີ້ເປັນທາງການບໍ?

ກະລຸນາແບ່ງປັນຄວາມຄິດເຫັນຂອງທ່ານໂດຍການສົ່ງອີເມວໄປທີ່ dani.mclean@rtd-denver.com ພາຍໃນວັນທີ 22 ພຶດສະພາ ຫຼື ສຶກສາເພີ່ມເຕີມໂດຍການເຂົ້າຮ່ວມງານ ຫຼື ເຂົ້າເບິ່ງທີ່ farefeedback.rtd-denver.com. ການບໍລິການແປພາສາ ແລະ ລ່າມແປພາສາແມ່ນມີໃຫ້ຕາມການສະເໜີຂໍ.